ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
*****

ທະນາຄານແຫ່ງ ສ.ປ.ປ. ລາວ
ກົມຄຸ້ມຄອງສະຖາບັນການເງິນ

ເລກທີ 597/ກຄສງ
ນະຄອນຫລວງວຽງຈັນ, ວັນທີ 12 MAY 2014

# ແຈ້ງການ

**ເຖິງ:** ທ່ານ ຄະນະສະພາບໍລິຫານ ແລະ ຜູ້ຈັດການ ຂອງສະຖາບັນການເງິນ ທີ່ໄດ້ຮັບອະນຸຍາດດໍາເນີນທຸລະກິດ ຈາກ ທະນາຄານແຫ່ງ ສປປ ລາວ.

**ເລື່ອງ:** ການເພີ່ມທະວີຄວາມເອົາໃຈໃສ່ໃນການພົວພັນທຸລະກິດ ກັບທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກ ທີ່ຕັ້ງຢູ່ໃນປະເທດທີ່ນອນໃນບັນຊີຕ່າງໆ ຂອງຄະນະກໍາມະການຕ້ານການຟອກເງິນ ສາກົນ FATF ກ່ຽວກັບການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ AML/CFT.

- ອີງຕາມ ແຈ້ງການ ຂອງໜ່ວຍງານຂໍ້ມູນຕ້ານການຟອກເງິນ ສະບັບເລກທີ 370/ໜຕຟງ, ລົງວັນທີ 02 ພຶດສະພາ 2014.

ທະນາຄານແຫ່ງ ສປປ ລາວ ກົມຄຸ້ມຄອງສະຖາບັນການເງິນ ຂໍຖືເປັນກຽດແຈ້ງມາຍັງບັນດາ ສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ ໃຫ້ເພີ່ມທະວີຄວາມເອົາໃຈໃສ່ໃນການຊອກຮູ້ ຫລື ລະມັດລະວັງໃນເວລາທີ່ມີການພົວພັນທຸລະກິດກັບ ທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ຕັ້ງຢູ່ໃນປະເທດທີ່ນອນໃນບັນຊີດໍາຂອງອົງການຕ້ານການຟອກເງິນສາກົນ (Financial Action Task Force “FATF”) ກ່ຽວກັບການຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (Anti-Money Laundering and Countering the Financing of Terrorism “AML/CFT”) ເພື່ອເຮັດແນວໃດບໍ່ໃຫ້ສະຖາບັນ ທີ່ມີໜ້າທີ່ລາຍງານຖືກສວຍໃຊ້ເປັນບ່ອນຟອກເງິນ ຫລືເປັນແຫລ່ງໃນການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ. (ລາຍລະອຽດສາມາດເຂົ້າເບິ່ງທີ່ເວບໄຊ www.fatf-gafi.org)

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ເພີ່ມທະວີເອົາໃຈໃສ່ຕາມເນື້ອໃນຈິດໃຈຂ້າງເທິງນີ້ດ້ວຍ.

ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ

ທະນາຄານແຫ່ງ ສປປ ລາວ ກົມຄຸ້ມຄອງສະຖາບັນການເງິນ

ວິໄລນິດ ອັກຄະວົງ

ທະນາຄານແຫ່ງ ສ.ປ.ປ. ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ ຕູ້ໄປສະນີ 19
ໂທລະພິມ : 4304 BNL. VTE.LS ໂທລະສານ : (856)-21-21 3108 ໂທລະສັບ : 213109-213110 E-mail:Bol@pan-laos.net.la